ການປູກຜັກກະລ່ຳດອກຂາວແລະບອັກໂຄລີ(ດອກສີຂຽວ)

ໂດຍ: ທົງທອງ ເພັດວິໄຊ, ພະແນກບໍລິຫານ

ພືດສະນິດນີ້ ແມ່ນພືດຊະນິດນຶ່ງ ທີ່ໃຊ້ບໍລິໂພກສະເພາະສ່ວນດອກເທົ່ານັ້ນ ແລະ ຍັງມີທາດອາຫານສູງ , ເຊິ່ງໃຊ້ປຸງ ແຕ່ງອາຫານປະເພດຂົ້ວ, ແກງ ຫຼື ຫນຶ້ງກິນກັບແຈ່ວກໍ່ໄດ້ແລະ ມີຂາຍຕາມຕະຫຼາດທົ່ວໄປ.

ວິທີການປູກ

ເມື່ອກ້າເບ້ຍ ໄດ້ 30-35 ວັນ ກໍ່ສາມາດຍ້າຍປູກໄດ້.

ການປູກ:

ໃຊ້ສົ່ງມຂຸດຂຸມ ແລ້ວໃສ່ປຸຍສູດ 15-15-15 ໃນອັດຕາສ່ວນ 25 ກລ/ໄລ່ ແລະ ປຸຍຄອກ 1 ກະປ໋ອງນົ້ມ/ຂຸມ ຄົນໃຫ້ເຂົ້າກັນ,ໄລຍະໃນການປູກ ແມ່ນ 30x30 ຊຕມ. ຫຼັງຈາກນັ້ນ ໃຫ້ເອົາເຟືອງປົກບາງໆ ເພື່ອຊ່ວຍຮັກສາຄວາມຊຸ່ມຂອງດິນ, ແລ້ວຫົດນ້ຳໃຫ້ຊຸ່ມພໍດີ ຕໍ່ຈາກນັ້ນໃຫ້ຫົດນ້ຳທຸກມື້ ຄື: ຕອນເຊົ້າແລະ ຕອນແລງ.

ການໃສ່ປຸຍ

- ໃສ່ອ້ອມຂຸມ ແລະ ເມື່ອອາຍຸໄດ້ 14 ວັນ ຫຼັງຍ້າຍປູກ ໃຊ້ປຸຍສູດ 15-15-15 ໃນອັດຕາ 25 ກລ/ໄລ່ຫຼື ສູດ13-13-21 ໃນອັດຕາ 30 ກລ/ໄລ່.
- ເມື່ອອາຍຸໄດ້ 20 ວັນ ຫຼັງຍ້າຍປູກ ໃຊ້ປຸຍຢູເຣຍ(46-0-0) ໃນອັດຕາ 25 ກລ/ໄລ່.
- ເມື່ອອາຍຸໄດ້ 40 ວັນ ຫຼັງຍ້າຍປູກໃຊ້ປຸຍຢູເຣຍ(46-0-0) ໃນອັດຕາ 25 ກລ/ໄລ່.

ອາຍຸການເກັບກ່ຽວ

- ເມື່ອກະລ່ຳດອກ ມີອາຍຸໄດ້ 55-60 ວັນ ຫຼັງຍ້າຍປູກ ກໍ່ສາມາດເກັບກ່ຽວຜົນຜະລິດ ເພື່ອບໍລິໂພກໄດ້ ຫຼື ຈຳໜ່າຍຕາມທ້ອງຕະຫຼາດ.
- ລາຄາຂາຍ ແມ່ນປະມານ 10,000-15,000 ກີບ/ກິໂລ ຫຼື ເກີນກວ່ານັ້ນ ໃນໄລຍະຫົວປີ ທີ່ຜັກມີຈຳກັດ.